**ROYAL THAI EMBASSY**
**VIENTIANE**

ປະກາດສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ນະຄອນຫຼວງວຽງຈັນ
ທີ 29001/21

ເລື່ອງ: ການໃຊ້ໃບຂັບຂີ່ ສປປ ລາວ ໃນປະເທດໄທ

ຕາມທີ່ປະກົດເປັນຂ່າວໃນສື່ອອນລາຍວ່າ ໃບຂັບຂີ່ ສປປ ລາວ ໃຊ້ໃນປະເທດໄທພຽງແຕ່ເຂດຈັງຫວັດອຸດອນທານີ ນັ້ນ ສະຖານເອກອັກຄະຣາຊະທູດ ຂໍຣຽນດັ່ງນີ້:

1. ໃບຂັບຂີ່ໃນຮູບແບບ Smart Card ຂອງຣາຊະອານາຈັກໄທ ແລະ ສປປ ລາວ <u>ສາມາດໃຊ້ໄດ້ລະຫວ່າງກັນ</u> ຕາມຄວາມຕົກລົງ The Recognition of Domestic Driving License Issued by ASEAN Countries 1985 ແລະ ຂໍ້ຕົກລົງກຳໜົດລາຍລະອຽດ ການຂົນສົ່ງທາງບົກລະຫວ່າງລັດຖະບານແຫ່ງຣາຊະອານາຈັກໄທ ແລະ ລັດຖະບານແຫ່ງ ສປປ ລາວ ປີ ພ.ສ. 2544 ເຊິ່ງປະກອບດ້ວຍຄວາມຕົກລົງວ່າດ້ວຍການຂົນສົ່ງທາງບົກລະຫວ່າງລັດຖະບານແຫ່ງຣາຊະອານາຈັກໄທ ແລະ ລັດຖະບານແຫ່ງ ສປປ ລາວ ປີ ພ.ສ. 2542.

2. ເຖິງແມ່ນວ່າຄວາມຕົກລົງດັ່ງກ່າວ ທີ່ທັງສອງປະເທດໄດ້ລະບຸວ່າ ໃນກໍລະນີທີ່ໃບຂັບຂີ່ທີ່ບໍ່ໄດ້ອອກເປັນພາສາອັງກິດຕ້ອງມີເອກະສານການແປເປັນພາສາອັງກິດທີ່ໄດ້ຮັບການຮັບຮອງນິຕິກອນ (ຮັບຮອງຄວາມຖືກຕ້ອງຂອງເອກະສານ) ປະກອບສະເໜີ ຈຶ່ງສາມາດໃຊ້ໃນປະເທດອື່ນໄດ້.

3. ໂດຍທີ່ໃບຂັບຂີ່ຂອງ ສປປ ລາວ ອອກເປັນພາສາລາວ ແລະ ພາສາຝຣັ່ງຈຶ່ງອາດຕ້ອງໄດ້ຮັບການແປເປັນພາສາອັງກິດ ແລະ ຮັບຮອງນິຕິກອນກ່ອນ ຈຶ່ງສາມາດໃຊ້ໃນປະເທດໄທ ແລະ ປະເທດອື່ນໆໃນອາຊຽນໄດ້.

ຈຶ່ງແຈ້ງມາເພື່ອຊາບໂດຍທົ່ວກັນ

ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ
ນະຄອນຫຼວງວຽງຈັນ
9 ພະຈິກ 2018

ຝ່າຍກົງສຸນ
ໂທຣ: +856 21 415335
ໂທລະສານ: +856 21 415336